# ໂຄງການຮ່ວມມືກັບອົງການສະຫະປະຊາຊາດ ເພື່ອສະໜັບສະໜູນວຽກປົກປ້ອງສັງຄົມ: ສ້າງພື້ນຖານໃນການປົກປ້ອງສັງຄົມຂັ້ນພື້ນຖານ ຢູ່ ສປປ ລາວ (2020 – 2021)

## ບໍ່ປະຖິ້ມໃຜຢູ່ເບື້ອງຫຼັງ

**ເພື່ອການບັນລຸວິໄສທັດພາຍໃນປີ 2030,** ສປປ ລາວ ໄດ້ສືບຕໍ່ວຽກງານລຶບລ້າງຄວາມທຸກຍາກ ແລະ ຫລຸດຜ່ອນຄວາມບໍ່ສະເໝີພາບ, ປັບປຸງດ້ານໂພຊະນາການ ແລະ ພັດທະນາລະບົບໃຫ້ຍືນຍົງ




## ຈຳເປັນຕ້ອງສ້າງໃຫ້ມີລະບົບປົກປ້ອງສັງຄົມ ໃນ ສປປ ລາວ

### ສິ່ງທ້າທາຍດ້ານເສດຖະກິດ-ສັງຄົມຕໍ່ປະຊາກອນ

ຄວາມທຸກຍາກ ຍັງກວມອັດຕາທີ່ສູງ, ກະທົບ 1 ສ່ວນ 5 ຂອງປະຊາກອນ. ຄວາມທຸກຍາກ ແລະ ເດັກເຕ້ຍກວ່າມາດຕະຖານ ແມ່ນກວມອັດຕາສູງຢູ່ໃນເຂດຊົນນະບົດ ແລະ ກຸ່ມຊົນເຜົ່າ.

ອັດຕາເດັກຂາດສານອາຫານແມ່ນຍັງສູງຫຼາຍ ແລະ ອັດຕາເດັກເຕ້ຍກ່ວາມາດຕະຖານ ກວມປະມານ 1 ສ່ວນ 3 ຂອງເດັກໃນເກນອາຍຸລຸ່ມ 5 ປີທັງໝົດ. ອາຫານກາງເວັນ ທີ່ໂຮງຮຽນສະໜອງໃຫ້ແມ່ນບໍ່ມີໂພຊະນາການພຽງພໍ.

ແມ່ຍິງ ແລະ ເດັກຍິງ ມີລະດັບການສຶກສາ ແລະ ສະພາວະດ້ານສຸຂະພາບຍັງບໍ່ສູງ. ປະມານ 1 ສ່ວນ 5 ຂອງເຂົາເຈົ້າໄດ້ເຂົ້າຮຽນແຕ່ອອກໂຮງຮຽນພາຍຫຼັງຍ້ອນຂໍ້ຈຳກັດດ້ານການເງິນ.

ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດມັກຈະໄດ້ຮັບຜົນກະທົບຈາກວິກິດການ ເສດຖະກິດ ແລະ ໄພພິບັດທຳມະຊາດ.

### ສິ່ງທ້າທາຍດ້ານວຽກງານປົກປ້ອງສັງຄົມ

ລະບົບປົກປ້ອງສັງຄົມແມ່ນຍັງມີລັກສະນະກະແຈກກະຈາຍ. ຫຼາຍແຜນງານຍັງເອື່ອຍອີງໃສ່ການຊ່ວຍເຫຼືອລ້າເປັນຫຼັກ ແລະ ຂາດການປະສານສົມທົບທີ່ກົມກຽວ ໃນການຈັດຕັ້ງປະຕິບັດ.

ການຈັດສັນງົບປະມານໃຫ້ແກ່ກອງທຶນທີ່ບໍ່ແມ່ນພາກບັງຄັບ ສ່ວນຫຼາຍແມ່ນຍັງຂຶ້ນກັບຜູ້ໃຫ້ທຶນ, ເຊິ່ງເຮັດໃຫ້ບໍ່ມີຄວາມສອດຄ່ອງ ແລະ ຍືນຍົງ.

ລະບົບປະກັນສັງຄົມ ຍັງບໍ່ຕອບສະໜອງຄວາມຕ້ອງການ ດ້ານເສດຖະກິດນອກລະບົບ. ຜູ້ອອກແຮງງານໃນເຂດຊົນນະບົດ, ຊາວກະສິກອນຂະໜາດນ້ອຍ ແລະ ກຸ່ມຜູ້ດ້ອຍໂອກາດ ຍັງປະສົບບັນຫາຄວາມບໍ່ໝັ້ນຄົງດ້ານອາຫານ ແລະ ລາຍໄດ້.

ຂາດບຸກຄະລະກອນທີ່ມີຄວາມອາດສາມາດໃນການອອກແບບ ແລະ ຈັດຕັ້ງປະຕິບັດລະບົບປົກປ້ອງສັງຄົມ.




ເປົ້າໝາຍ 1.3
ພວກເຮົາສາມາດປະກອບສ່ວນໃນການລຶບລ້າງຄວາມທຸກຍາກໂດຍຜ່ານການຈັດຕັ້ງປະຕິບັດລະບົບ ປົກປ້ອງສັງຄົມທີ່ເໝາະສົມສຳລັບທຸກຄົນ.




ເປົ້າໝາຍ 2.2
ພວກເຮົາເປັນສ່ວນໜຶ່ງໃນການລຶບລ້າງໄພອຶດຫິວ ແລະ ຫຼຸດຜ່ອນພາວະເດັກເຕ້ຍ, ແກ້ໄຂບັນຫາຄວາມຕ້ອງການດ້ານໂພຊະນາການໃຫ້ແກ່ແມ່ຍິງໄວໜຸ່ມ ແລະ ແມ່ຍິງຖືພາ.

ໂຄງການຮ່ວມມືຂອງອົງການສະຫະປະຊາຊາດດ້ານການປົກປ້ອງສັງຄົມ ຈະປະກອບສ່ວນຕໍ່ການບັນລຸ 4 ເປົ້າໝາຍພັດທະນາແບບຍືນຍົງ




ເປົ້າໝາຍ 16.9
ພວກເຮົາສົ່ງເສີມການຢູ່ຮ່ວມກັນແບບສັນຕິ, ເຂົ້າເຖິງຄວາມຍຸຕິທຳ ແລະ ການສ້າງສະຖາບັນທີ່ມີຄວາມຮັບຜິດຊອບ ໂດຍການໃຫ້ສະຖານະ ແລະ ຂຶ້ນທະບຽນການເກີດໃຫ້ແກ່ທຸກຄົນ.




ເປົ້າໝາຍ 17.3
ພວກເຮົາສາມາດຊ່ວຍໃນການລະດົມທຶນເພີ່ມເຕີມຈາກຫຼາຍແຫຼ່ງທຶນເພື່ອການພັດທະນາແບບຍືນຍົງ.

# ຄາດຄະເນຜົນໄດ້ຮັບຂອງໂຄງການ

ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງອົງການຈັດຕັ້ງລັດດ້ານການວາງແຜນ, ຊີ້ນຳນຳພາ, ຄຸ້ມຄອງບໍລິຫານ ແລະ ຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ

- ພາກສ່ວນຈັດຕັ້ງປະຕິບັດມີຄວາມຮູ້, ຄວາມເຂົ້າໃຈເພີ່ມຂຶ້ນໃນດ້ານວຽກງານປົກປ້ອງສັງຄົມ ແລະ ສາມາດອອກແບບລະບົບດັ່ງກ່າວໄດ້
- ພະນັກງານລັດມີຄວາມຮູ້, ຄວາມເຂົ້າໃຈ ເຖິງຜົນກະທົບຂອງວຽກງານປົກປ້ອງສັງຄົມ ແລະ ຄວາມສຳຄັນໃນການຈັດສັນງົບປະມານຈາກແຫຼ່ງທຶນພາຍໃນ ຕໍ່ວຽກງານດັ່ງກ່າວ
- ເຄື່ອງມືຕິດຕາມ ປະເມີນຜົນ ຂອງຍຸດທະສາດປົກປ້ອງສັງຄົມແຫ່ງຊາດໄດ້ຮັບການພັດທະນາ ໂດຍສອດຄ່ອງກັບເປົ້າໝາຍພັດທະນາແບບຍືນຍົງ 1.3 ຂອງອົງການສະຫະປະຊາຊາດ
- ຮັບປະກັນໃຫ້ມີແຫຼ່ງທຶນສະເພາະສຳລັບວຽກງານປົກປ້ອງສັງຄົມໃນແຜນງົບປະມານແຫ່ງຊາດ.
- ກອງທຶນປົກປ້ອງສັງຄົມແຫ່ງຊາດໄດ້ຮັບການອອກແບບ ເພື່ອເປັນຊ່ອງທາງໃນການລະດົມທຶນ

ຢ່າງໜ້ອຍ ເດັກ 1,400 ຄົນໄດ້ຮັບຊຸດອຸດໜູນສະຫວັດດີການສັງຄົມແບບເຊື່ອມສານ, ລວມທັງເງິນອຸດໜູນເບ້ຍລ້ຽງແມ່ ແລະ ເດັກເກີດໃໝ່, ຊຸດບໍລິການຊ່ວຍເຫຼືອເດັກ ແລະ ບໍລິການຊ່ວຍຂຶ້ນທະບຽນເກີດຂອງເດັກ

- ດຳເນີນການປະເມີນ ແລະ ກຳນົດແຜນປະຕິບັດ ການອຸດໜູນເບ້ຍລ້ຽງແມ່ ແລະ ເດັກ
- ອອກແບບ ການໃຫ້ອຸດໜູນແມ່ ແລະ ເດັກ ແລະ ລະບົບຂໍ້ມູນຂ່າວສານ
- ອົງການຈັດຕັ້ງທີ່ກ່ຽວຂ້ອງມີຄວາມພ້ອມໃນການຈັດຕັ້ງປະຕິບັດການໃຫ້ອຸດໜູນ
- ຊຸດອຸດໜູນແມ່ ແລະ ເດັກໄດ້ຖືກທົດລອງຢູ່ຢ່າງໜ້ອຍ 1 ເມືອງທີ່ທຸກຍາກກ່ວາໝູ່
- ສ້າງເຄື່ອງມືຕິດຕາມ ແລະ ປະເມີນຜົນ ການໃຫ້ອຸດໜູນເບ້ຍລ້ຽງແມ່ ແລະ ເດັກ





ອົງປະກອບຫຼັກຂອງໂຄງການຮ່ວມມືຂອງ ສປຊ

1. ສ້າງຕັ້ງ **ລະບົບປົກປ້ອງສັງຄົມແບບລວມສູນ ພາຍໃນ 1 ກະຊວງ** ໃນ ສປປ ລາວ

2. **ຊຸດອຸດໜູນສະຫວັດດີການສັງຄົມແບບເຊື່ອມສານ ປະກອບດ້ວຍເງິນອຸດໜູນເບ້ຍລ້ຽງ,** ຊຸດບໍລິການສະຫວັດດີການເດັກ ແລະ ການຂຶ້ນທະບຽນການເກີດເພື່ອໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດເປັນວົງກ້ວາງ.

3. ອອກແບບ **ກົນໄກການເງິນແບບຍືນຍົງ, ມີລັກສະນະສະເພາະຊາດ,** ແລະ ເພື່ອຮັບປະກັນໃຫ້ມີງົບປະມານສະເພາະສຳລັບວຽກງານປົກປ້ອງສັງຄົມ ໃນແຜນງົບປະມານແຫ່ງຊາດ

4. ນຳໃຊ້**ກົນໄກການຈັດຕັ້ງປະຕິບັດ ແລະ ຊ່ອງທາງໃນການຈ່າຍເງິນແບບໃໝ່** ເພື່ອສ້າງຄວາມເຂົ້າໃຈໃຫ້ທຸກຄົນໃນສັງຄົມ ແລະ ຊອກຫາຊ່ອງທາງໃນການສະໜັບສະໜູນເພື່ອຂະຫຍາຍລະບົບປົກປ້ອງ ສັງຄົມ

5. **ນຳໃຊ້ຫຼັກຖານຈາກການຈັດຕັ້ງປະຕິບັດທົດລອງ ແລະ ຕິດຕາມປະເມີນຜົນ**ຂອງການອຸດໜູນເບ້ຍລ້ຽງແມ່ ແລະ ເດັກ ເພື່ອສະແດງໃຫ້ເຫັນເຖິງ ຄວາມເປັນໄປໄດ້ ແລະ ຜົນກະທົບຂອງວຽກງານປົກປ້ອງສັງຄົມ, ເພື່ອສາມາດຈັດສັນງົບປະມານໃຫ້ຫຼາຍຂຶ້ນ ແລະ ຂະຫຍາຍກິດຈະກຳຕື່ມ.

## ກອງທຶນຂອງອົງການສະຫະປະຊາຊາດເພື່ອການພັດທະນາແບບຍືນຍົງ (SDGs)

* ສ້າງຕັ້ງຂຶ້ນປີ2014 ເພື່ອຂັບເຄື່ອນການບັນລຸ 17 ເປົ້າໝາຍພັດທະນາແບບຍືນຍົງ (SDGs) ແລະ ວິໄສທັດພາຍໃນປີ 2030.
* ແຫຼ່ງທຶນແມ່ນມາຈາກການປະສອບສ່ວນຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ.
* ສະໜັບສະໜູນການແກ້ໄຂບັນຫາມີກະທົບຕໍ່ການພັດທະນາແບບຍືນຍົງ, ລະດົມພັນທະມິດແບບມີຍຸດທະສາດ ແລະ ຊ່ວຍຊອກຫາແຫຼ່ງທຶນໃໝ່ເພື່ອການຈັດຕັ້ງປະຕິບັດເປົ້າໝາຍ ພັດທະນາແບບຍືນຍົງ.

ສຳລັບຂໍ້ມູນເພີ່ມເຕີມ,
ຕິດຕໍ່ matthew.johnson-idan@one.un.org
ແລະ del@ilo.org

Twitter: https://twitter.com/jointSDGFund

Joint SDG Fund: https://www.jointsdgfund.org/programme/leaving-no-one-behind-establishing-basis-social-protection-floors-lao-pdr